## ມິຊຊາອາທິດທີ 22 ການົດທຳມະດາ ປີ B

## ວັນອາທິດທີ 29 ສິງຫາ 2021



**ພຣະວໍລະສານໂດຍນັກບຸນມາໂກ 7:1-8 ກ:14-15:21-23**

ໃນເວລານັ້ນ, ພວກຟາຣີເຊວແລະພວກນັກກົດໝາຍລາງຄົນຈາກນະຄອນເຢຣູຊາແລມມາເຕົ້າໂຮມກັນຢູ່ອ້ອມພຣະເຢຊູເຈົ້າ. ແລະເຫັນພວກລູກສິດລາງຄົນຂອງພຣະອົງກິນເຂົ້າດ້ວຍມືເປື້ອນຄືວ່າມືບໍ່ລ້າງ. ຕາມຈິງ, ພວກຟາຣີເຊວກໍເໝືອນກັບຄົນຢິວທັງຫລາຍທີ່ສັດຊື່ຕໍ່ປະເພນີບູຮານເຄີຍລ້າງມືຢ່າງຄັກແນ່ກ່ອນກິນເຂົ້າ. ເມື່ອກັບຈາກຕະຫລາດເຂົາກໍຊ່ວຍຄືງເສຍກ່ອນຈຶ່ງກິນເຂົ້າ. ພວກເຂົາຍັງຖືທຳນຽມອີກຫລາຍຢ່າງເຊັ່ນວ່າ: ການລ້າງຈອກ, ລ້າງອຸນໍ້າ, ລ້າງຈານ.

ພວກຟາຣີເຊວແລະນັກກົດໝາຍທູນຖາມພຣະເຢຊູເຈົ້າວ່າ:“ເປັນຫຍັງພວກລູກສິດຂອງທ່ານຈຶ່ງບໍ່ຖືຕາມປະເພນີບູຮານ? ພວກເຂົາກິນເຂົ້າຢ່າງບໍ່ລ້າງມື”.ພຣະເຢຊູເຈົ້າຕອບວ່າ: “ປະພາສິກອິຊາຢາໄດ້ເວົ້າໃສ່ພວກເຈົ້າຜູ້ຫຽມໃຈບຸນຢ່າງຖືກຕ້ອງ. ດັ່ງມີຂຽນໄວ້ວ່າ: “ປະຊາກອນນີ້ນັບຖືເຮົາແຕ່ປາກ, ສ່ວນຫົວໃຈເຂົານັ້ນຢູ່ຫ່າງໄກເຮົາ. ການສັກກາລະບູຊາທີ່ເຂົາຖະຫວາຍເຮົານັ້ນກໍບໍ່ມີປະໂຫຍດຫຍັງ. ຄຳສັ່ງສອນທີ່ເຂົາສັ່ງສອນນັ້ນເປັນແຕ່ຂໍ້ບັງຄັບຂອງມະນຸດລ້າໆ. ພວກເຈົ້າປະຖິ້ມພຣະບັນຍັດຂອງພຣະເຈົ້າ ເພື່ອເນົາມົວນຳປະເພນີຂອງມະນຸດ.”

ແລ້ວພຣະເຢຊູເຈົ້າຊົງຮຽກຝູງຊົນມາອີກແລະກ່າວວ່າ: “ທ່ານທັງຫລາຍ, ຈົ່ງຟັງເຮົາແລະເຂົ້າໃຈໃຫ້ດີຄື: “ບໍ່ມີຫຍັງຢູ່ນອກທີ່ເຂົ້າໄປໃນຄົນຈະທຳໃຫ້ຄົນເປື້ອນໄດ້. ແຕ່ສິ່ງທີ່ທຳໃຫ້ຄົນເປື້ອນນັ້ນມັນອອກມາຈາກຕົວຄົນເອງ. ຍ້ອນວ່າຄວາມຄຶດຊົ່ວຮ້າຍຕ່າງໆມາຈາກພາຍໃນ, ມາຈາກຫົວໃຈຂອງຄົນເຊັ່ນວ່າ: ຄວາມຊົ່ວລາມົກ, ການລັກຂະໂມຍ, ການຄາດຕະກຳ, ການລ່ວງປະເວນີ, ຄວາມໂລບໂລພາ, ຄວາມໂຫດຮ້າຍ, ການສໍ້ໂກງ, ຄວາມລາມົກ, ຄວາມອິດສາ, ການໃສ່ຮ້າຍປ້າຍສີ, ຄວາມຈອງຫອງ, ບ້າຍົດ ສິ່ງຊົ່ວຊ້າຕ່າງໆເຫລົ່ານີ້ອອກມາຈາກພາຍໃນແລະທຳໃຫ້ຄົນເປື້ອນ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ວັນນີ້, ພວກຟາຣີເຊວແລະນັກກົດໝາຍມາຈັບຜິດລູກສິດພຣະເຢຊູເຈົ້າໂດຍອ້າງໃສ່ພຣະທຳບັນຍັດເລື່ອງການຊຳລະລ້າງ. ຍ້ອນພວກລູກສິດຂອງພຣະເຢຊູເຈົ້າຮັບປະທານອາຫານໂດຍບໍ່ໄດ້ລ້າງມືກ່ອນ. ໝາຍວ່າພວກຟາຣເຊວແລະນັກກົດໝາຍເປັນຄົນຖືເຄັ່ງຄັດພຣະທຳບັນຍັດ. ແຕ່ບັນຫາກໍຄື, ພວກເຂົາຖືພຽງແຕ່ຕາມຕົວອັກສອນແລະພາຍນອກເທົ່ານັ້ນ. ແຕ່ພວກເຂົາເອງບໍ່ປະຕິບັດແລະຈິດໃຈພວກເຂົາຍັງຢູ່ຫ່າງໄກພຣະທຳບັນຍັດຂອງພຣະເຈົ້າ. ດ້ວຍເຫດນີ້, ພວກເຂົາຈຶ່ງໃຫ້ຄວາມສຳຄັນກັບສິ່ງພາຍນອກ ເຊັ່ນການລ້າງມືແລະເຄື່ອງໃຊ້ຂອງສອຍໃຫ້ສະອາດ. ແຕ່ສິ່ງທີ່ພຣະທຳບັນຍັດສອນບໍ່ແມ່ນແຕ່ສິ່ງທີ່ຢູ່ພາຍນອກ ແຕ່ແມ່ນສິ່ງທີ່ຢູ່ພາຍໃນອັນແມ່ນຈິດໃຈນັ້ນອີກດ້ວຍ. ເພາະສິ່ງເປື້ອນໝອງທີ່ຢູ່ພາຍນອກອາດຈະຊຳລະລ້າງໄດ້ຢ່າງງ່າຍດາຍ. ແຕ່ສິ່ງທີ່ເປື້ອນໝອງຢູ່ຂ້າງໃນອາດຈະຊຳລະລ້າງໄດ້ຍາກ. ເພາະບໍ່ວ່າຈະເປັນຄວາມປາດຖະໜາບໍ່ດີຕ່າງໆເຊັ່ນ: ຄວາມຊົ່ວລາມົກ, ການລັກຂະໂມຍ, ການຄາດຕະກຳ, ການລ່ວງປະເວນີ, ຄວາມໂລບໂລພາ, ຄວາມໂຫດຮ້າຍ, ການສໍ້ໂກງ, ຄວາມລາມົກ, ຄວາມອິດສາ, ການໃສ່ຮ້າຍປ້າຍສີ, ຄວາມຈອງຫອງ ແລະການຫລົງໄຫລຍົດຖາບັນດາສັກນັ້ນລ້ວນແຕ່ອອກມາຈາກໃຈ. ເພື່ອຈະຊຳລະລ້າງສິ່ງເປື້ອນໝອງເຫລົ່ານີ້ ພວກເຮົາຕ້ອງການການຊຳລະລ້າງດ້ວຍວາຈາຂອງພຣະເຈົ້າ. ຫລືເວົ້າອີກຢ່າງ, ພຣະເຢຊູເຈົ້າຜູ້ເປັນພຣະວາຈານາດຂອງພຣະເຈົ້າໄດ້ລົງມາບັງເກີດເປັນມະນຸດ ແລະສະລະຊີວິດບົນໄມ້ກາງເຂນ ເພື່ອຊຳລະລ້າງຄວາມເປື້ອນໝອງທີ່ຢູ່ຂ້າງໃນຂອງພວກເຮົາໃຫ້ສະອາດບໍລິສຸດດ້ວຍນ້ຳແລະເລືອດທີ່ໄຫລລົ່ງມາຈາກພຣະສີຂ້າງຂອງພຣະອົງບົນໄມ້ກາງເຂນ. ເພື່ອໃຫ້ພວກເຮົາໄດ້ສະອາດບໍລິສຸດ.

**ພາວະນາ**

ໂອພຣະເຢຊູເຈົ້າ, ໂຜດໃຫ້ວາຈາແລະພຣະກາຍຂອງພຣະອົງຊຳລະລ້າງຈິດໃຈຂອງລູກໃຫ້ສະອາດບໍລິສຸດ. ເພື່ອລູກຈະໄດ້ມີຊີວິດຕາມນ້ຳພຣະໄທຂອງພຣະອົງແລະເດີນຕາມພຣະອົງໄປຕະຫລອດຊີວິດຂອງລູກດ້ວຍເທີ້ນກ ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ